ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໂຍທາທິການ ແລະ ຂົນສົ່ງ

ກົມຂົວທາງ ເລກທີ 11207 / ກຂທ

ຄະນະກຳມະການປະມູນ ນະຄອນຫຼວງວຽງຈັນ, ວັນທີ 09 ພຶດສະພາ 2024

# ໜັງສືເຊີນເຂົ້າຮ່ວມການປະມູນສົມທຽບລາຄາ

ເຖິງ : ບັນດາບໍລິສັດຮັບເໝົາກໍ່ສ້າງ ແລະ ສ້ອມແປງ

ເລື່ອງ: ເຊີນເຂົ້າຮ່ວມປະມູນສົມທຽບລາຄາການປັບປຸງ-ສ້ອມແປງລະບົບຫ້ອງວິໄຈ

1. ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ໄດ້ຮັບທຶນຈາກທະນາຄານໂລກ ເພື່ອໃຊ້ຈ່າຍສຳລັບໂຄງການພັດທະນາຕາມແລວທາງເສດຖະກິດຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ (SEARECC) ແລະ ມີຈຸດປະສົງນຳໃຊ້ງົບປະມານສ່ວນໜຶ່ງຂອງທຶນເຂົ້າໃນລາຍຈ່າຍຂອງການປັບປຸງ-ສ້ອມແປງ ລະບົບຫ້ອງວິໄຈຂອງສູນເຕັກນິກກະສິກຳ ATC, ກະຊວງກະສິກຳ ແລະ ປ່າໄມ້ ພາຍໃຕ້ໂຄງການພັດທະນາຕາມແລວທາງເສດຖະກິດອາຊີຕາເວັນອອກສຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ, ດ້ວຍການປະມູນສົມທຽບລາຄາ.
2. ກະຊວງ ໂຍທາທິການ ແລະ ຂົນສົ່ງ ຂໍເຊີນບັນດາບໍລິສັດທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມ ເຂົ້າຍື່ນຊອງປະມູນສົມທຽບລາຄາສຳລັບ ການປັບປຸງ-ສ້ອມແປງ ລະບົບຫ້ອງວິໄຈ ຂອງສູນ ເຕັກນິກກະສິກຳ ATC, ກະຊວງກະສິກຳ ແລະ ປ່າໄມ້ ພາຍໃຕ້ໂຄງການພັດທະນາຕາມແລວທາງເສດຖະກິດຕາເວັນອອກສ່ຽງໃຕ້ ເພື່ອການເຊື່ອມຈອດ-ເຊື່ອມໂຍງ, ໄລຍະເວລາການສ້ອມແປງ 03 ເດືອນ ນັບແຕ່ມື້ເຊັນສັນຍາ.
3. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນສົມທຽບລາຄາທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
4. ບໍລິສັດທີ່ມີຄວາມສົນໃຈເຂົ້າຮ່ວມການປະມູນສົມທຽບລາຄາ ສາມາດຕິດຕໍ່ພົວພັນເອົາເອກະສານໃນໂມງລັດຖະການໄດ້ທີ່ ກົມແຜນການ ແລະ ການເງິນ, ກະຊວງ ໂຍທາທິການ ແລະ ຂົນສົ່ງ, ຖະໜົນລ້ານຊ້າງ, ບ້ານ ໂພນໄຊ, ເມືອງ ໄຊເສດຖາ, ນະຄອນຫຼວງວຽງຈັນ. ເບີໂທ: +856-20 9985 5389; +856-20 5695 6995 ໃນລາຄາຊອງລະ 1.000.000 ກີບ (ໜຶ່ງລ້ານກີບ) ຈຳນວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ. ວິທີການຊຳລະຕ້ອງເປັນເງິນສົດເທົ່ານັ້ນ.
5. ຊອງປະມູນສົມທຽບລາຄາຕ້ອງສົ່ງກ່ອນ ເວລາ **14:00 ໂມງສວຍ ຂອງວັນທີ 28 ພຶດສະພາ 2024 ທີ່ຫ້ອງປະຊຸມກົມແຜນການ ແລະ ການເງິນ, ກະຊວງໂຍທາທິການ ແລະ ຂົນສົ່ງ**, ຖະໜົນລ້ານຊ້າງ, ບ້ານໂພນໄຊ, ເມືອງໄຊເສດຖາ, ນະຄອນຫຼວງວຽງຈັນ ແລະ ຊອງປະມູນສົມທຽບລາຄາທຸກໆຊອງຈະໄດ້ເປີດໃນເວລາ **14:15 ໂມງສວຍ ຂອງວັນດຽວກັນ** ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບໍລິສັດທີ່ມີຄວາມສົນໃຈເຂົ້າຮ່ວມສົມທຽບລາຄາດັ່ງນີ້.

**ຮອງຫົວໜ້າກົມ**

**ຫົວໜ້າຄະນະກຳມະການຈັດຊື້-ຈັດຈ້າງ**

ກົມຂົວທາງ

ສີສຸພັນ ຈັນສະຫວັດ